ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວມະຫາຊົນ

ເລກທີ: 0516 /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 23 FEB 2022

## ໜັງສືແຈ້ງເຊີນປະມູນ

1. ບໍລິສັດຜະລິດ-ໄຟຟ້າລາວມະຫາຊົນ (ຜ-ຟຟລ), ມີຄວາມຕ້ອງການ ການບໍລິການ ວຽກງານ ສ້ອມແປງ ແລະ ປ່ຽນຖ່າຍອຸປະກອນ Gear Box ຂອງເຄື່ອງຈັກ Unit1 ເຂື່ອນໄຟຟ້ານ້ຳຊອງ ດ້ວຍການດຳເນີນການປະມູນເປີດກວ້າງພາຍໃນ.

2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ພາຍໃຕ້ ລະບຽບ ຈັດຊື້-ຈັດຈ້າງ ຜ-ຟຟລ ສະບັບປັບປຸງປີ 2021, ສະບັບລົງວັນທີ 25/06/2021.

3. ຜ-ຟຟລ ຂໍເຊີນບັນດາ ບໍລິສັດ ທີ່ມີເງື່ອນໄຂເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ແລະ ພົວພັນກັບການບໍລິການດັ່ງກ່າວເຂົ້າຮ່ວມ.

4. ບໍລິສັດ ທີ່ມີເງື່ອນໄຂເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ສຳນັກງານໃຫຍ່ ຜ-ຟຟລ, ຝ່າຍແຜນການ, ພະແນກຈັດຊື້,ໃນວັນລັດຖະການ, ນັບຈາກວັນທີ 28/02/2022 - 28/03/2022 ຄື: ຕອນເຊົ້າເວລາ 08:30 - 12:00 ໂມງ ແລະ ຕອນບ່າຍເວລາ13:00 - 17:00ໂມງ, ສຳນັກງານຕັ້ງຢູ່:ຖະໜົນມິດຕະພາບ ລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ.ລາວ, ຕູ້ ປ.ນ 2392,ໂທລະສັບ: (856-21) 316 142, ໂທລະສານ: (856-21) 316 141.

5. ບໍລິສັດ ທີ່ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີຊື້ຊອງປະມູນເຖິງ ຜ-ຟຟລຕາມທີ່ຢູ່ທີ່ລະບຸໃນຂໍ້ 4, ການຂາຍຊອງປະມູນຈະໄດ້ເລີ່ມຂາຍແຕ່ວັນທີ 28/02/2022 - 28/03/2022,ໃນວັນ ແລະ ເວລາ ທີ່ລະບຸໃນ ຂໍ້ 4, ໃນລາຄາ 250.000 (ສອງແສນຫ້າສິບພັນກີບຖ້ວນ) ກີບ/ຊຸດ.ວິທີການຊຳລະຕ້ອງຊຳລະເປັນເງິນສົດເທົ່ານັ້ນ, ໂດຍຈຳນວນເງິນດັ່ງກ່າວນີ້ ຜ-ຟຟລ ຈະບໍ່ມີການສົ່ງຄືນ.

6. ການລົງສຳຫຼວດສະຖານທີ່ຕົວຈິງ ແລະ ເກັບຂໍ້ມູນຈະຈັດຂຶ້ນໃນວັນທີ 30/03/2022 ເວລາ 10:00 ໂມງ ທີ່ເຂື່ອນໄຟຟ້ານ້ຳຊອງ, ບ້ານ ຫີນເຫີບ, ເມືອງ ຫີນເຫີບ, ແຂວງ ວຽງຈັນ
   - ສຳລັບຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນ ແລະ ການເດີນທາງທັງໝົດແມ່ນຄວາມຮັບຜິດຊອບຂອງຜູ້ເຂົ້າຮ່ວມປະມູນ.

7. ຊອງປະມູນຕ້ອງສົ່ງໃຫ້ຕາມທີ່ຢູ່ທີ່ລະບຸໃນຂໍ້4, ກ່ອນເວລາ 14:00 ໂມງຂອງວັນທີ 20/04/2022.ກໍລະນີທີ່ທ່ານຫາກສົ່ງຊ້າກວ່າເວລາທີ່ກຳນົດໄວ້, ຜ-ຟຟລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ສຳລັບເວລາເປີດຊອງປະມູນຈະໄດ້ເລີ່ມເປີດໃນເວລາ 14:00 ໂມງເປັນຕົ້ນໄປຂອງວັນດຽວກັນ.ໂດຍເປີດຊ້ອງໜ້າຄະນະການຈັດຊື້ ຜ-ຟຟລ ແລະ ຕົວແທນຂອງຜູ້ເຂົ້າຮ່ວມປະມູນທີ່ສົນໃຈເຂົ້າຮ່ວມນຳ.

**ຜູ້ອຳນວຍການໃຫຍ່**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ດວງສີ ພາຣາຍົກ

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ຕູ້ ປ.ນ 2392,ນະຄອນຫຼວງວຽງຈັນ.

ໂທລະສັບ: (856-21) 316142, ແຟັກ: (856-21) 316141, ອີເມລ: edlgenhq@edlgen.com.la; ເວັບໄຊ: www.edlgen.com.la